ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ
BANQUE POUR LE COMMERCE EXTERIEUR LAO PUBLIC
ທັນສະໄໝ ວ່ອງໄວ ໝັ້ນໃຈ
MODERN QUICK RELIABLE

ສໍານັກງານໃຫຍ່

ເລກທີ: 2444/ທຄຕລ...2023........
ນະຄອນຫຼວງວຽງຈັນ, ວັນທີ: 05 JUL 2023

# ໜັງສືແຈ້ງເຊີນ

**ເຖິງ:** ບັນດາທ່ານຫົວໜ້າບໍລິສັດ, ຜູ້ສະໜອງ ທີ່ເປັນຕົວແທນຈໍາໜ່າຍປະເພດເຄື່ອງຈັກນັບເງິນ.

**ເລື່ອງ:** ເຊີນເຂົ້າຮ່ວມຍື່ນຊອງລາຄາ ເຄື່ອງຈັກນັບເງິນ, ເຄື່ອງຈັກນັບ-ຄັດໄຈ້-ກວດເງິນປອມ.

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (ທຄຕລ) ຂໍແຈ້ງເຊີນມາຍັງທ່ານ ຜູ້ສະໜອງເຄື່ອງຈັກຍື່ນຊອງປະມູນ ເຄື່ອງຈັກທີ່ສາມາດ: ນັບເງິນ-ຄັດໄຈ້ເງິນ-ກວດເງິນປອມໄດ້ຫຼາຍສະກຸນ ເພື່ອປະກອບເປັນເຄື່ອງມືຮັບໃຊ້ເຂົ້າໃນວຽກງານວິຊາສະເພາະຂອງທະນາຄານ ຄື: **ເຄື່ອງຈັກນັບເງິນ ຕັ້ງພື້ນ ຈໍານວນ 02 ໜ່ວຍ, ເຄື່ອງຈັກນັບກວດເງິນປອມ-ໄຈ້ປີນ-ລຽງ ໜ້າໃບເງິນ ລຸ້ນ 2 (1+1) ຊ່ອງ ຈໍານວນ 08 ໜ່ວຍ, ເຄື່ອງຈັກນັບ-ຄັດໄຈ້ເງິນລຸ້ນ 5 (4+1) ຊ່ອງ ຈໍານວນ 04 ໜ່ວຍ, ເຄື່ອງຈັກນັບ-ຄັດໄຈ້ເງິນລຸ້ນ 8 ຊ່ອງ ຈໍານວນ 01 ໜ່ວຍ** ຕາມເງື່ອນໄຂດັ່ງລຸ່ມນີ້:

➢ **ເອກະສານ ຊອງທີ 1 (ບໍ່ປິດຊອງ):**

1. ປະກອບເອກະສານໃບນາມນິຕິບຸກຄົນ ທີ່ດໍາເນີນທຸລະກິດຈໍາໜ່າຍເຄື່ອງຈັກນັບເງິນ, ຕ້ອງມີວິຊາການກ່ຽວກັບເຄື່ອງຈັກດັ່ງກ່າວໂດຍສະເພາະ ແລະ ມີປະສົບການ ຢ່າງໜ້ອຍ 3 ປີຂຶ້ນໄປ (ສໍາເນົາໃບທະບຽນວິສາຫະກິດ, ໃບຢັ້ງຢືນການເສຍອາກອນປະຈໍາປີ 3 ປີ ຍ້ອນຫຼັງ (2019, 2020, 2021) ແລະ ໃບຢັ້ງຢືນການເປັນຕົວແທນຈໍາໜ່າຍ).
2. ເອກະສານລາຍລະອຽດສະເປັກສິນຄ້າ, ການຮັບປະກັນ, ໄລຍະຈັດສົ່ງ, ການອັບເດດ Software, ການຝຶກອົບຮົມການໃຊ້ງານໃຫ້ພະນັກງານ ທຄຕລ, ລະບຸປີຜະລິດ-ປະເທດຜະລິດສິນຄ້າ, ການບໍາລຸງຮັກສາ-ການບໍລິການຫຼັງການຂາຍ, ການຮັບປະກັນການເຖູມຄືນ ໃນກໍລະນີທີ່ເງິນປອມສາມາດຜ່ານ ໄດ້ ແລະ ເງື່ອນໄຂອື່ນໆຢ່າງລະອຽດຕາມ Format ຄັດຕິດມາພ້ອມນີ້:

2.1 **ຄວາມສາມາດຂອງເຄື່ອງຈັກນັບເງິນ (ຢ່າງໜ້ອຍ):**

- ລະບົບການນັບເງິນເປັນລະບົບລົມດູດ (Vacuum Feed system).
- ຄວາມໄວໃນການນັບເງິນແມ່ນ ຢ່າງໜ້ອຍ 1.500 ໃບ/ນາທີ.
- ຊ່ອງໃສ່ເງິນສາມາດໃສ່ເງິນໄດ້ຢ່າງໜ້ອຍ 200 ໃບ.
- ຕົວເລກສະແດງຜົນຂະໜາດໃຫຍ່ ດ້ວຍລະບົບດິຈິຕອນ ແບບ LED ເຫັນໄດ້ຢ່າງຊັດເຈນງ່າຍໃນການເບິ່ງ, ສະແດງຜົນລວມສູງເຖິງ 05 ຫຼັກ ແລະ ສະແດງຜົນຈໍານວນໄດ້ 03 ຫຼັກ.
- ສາມາດກໍານົດການເຮັດວຽກຂອງເຄື່ອງໄດ້ທັງລະບົບ Auto ແລະ ລະບົບ Manual
- ມີສັນຍານເຕືອນເມື່ອມີການນັບຈໍານວນເງິນບໍ່ຖືກຕ້ອງຕາມທີ່ກໍານົດ ແລະ ແຈ້ງຈໍານວນທີ່ບໍ່ຖືກຕ້ອງ.
- ສາມາດນັບເງິນໃໝ່,ເກົ່າ ລວມກັນໄດ້ຢ່າງມີປະສິດທິພາບ.
- ມີສິນຄ້າໃຫ້ ທຄຕລ ທົດລອງຢ່າງໜ້ອຍ 01 ອາທິດ.



ເລກທີ 01, ຖະໜົນ: ປາງຄໍາ, ເມືອງ ຈັນທະບູລີ, ນະຄອນຫຼວງວຽງຈັນ, ສປປ ລາວ. ຕູ້ ປ.ນ: 2925, ໂທລະສັບ: (856-21) 213200-1, 222495, 217904, 217898-9
ແຟັກ: (856-21) 213202, 223012, 223245, Website: http:/www.bcel.com.la, E-mail: bcelhgv@bcel.com.la, SWIFT Code: COEBLALA

2.2 **ຄວາມສາມາດຂອງຈັກ 2 ຊ່ອງ** ຢ່າງໜ້ອຍ: ນັບເງິນ ກວດເງິນປອມ ໄຈ້ເງິນ ແລະ ລຽງໜ້າເງິນ; ກວດເງິນປອມໄດ້ ຢ່າງໜ້ອຍ 7 ສະກຸນເງິນເຊັ່ນ: (LAK, USD, CNY, THB, EUR, GBP,AUD); ຄວາມໄວໃນການນັບຢ່າງໜ້ອຍ 650 ໃບ/ນາທີ; ຊ່ອງຮັບເງິນທີ່ນັບແລ້ວ 200 ໃບ ສາມາດອ່ານຈຳນວນເງິນໄດ້ໂດຍບໍ່ຕ້ອງເລືອກສະກຸນ, ຄວາມໄວໃນການນັບເງິນສາມາດປັບໄດ້ຫຼາຍລະດັບ, ສາມາດຮັບເງິນລຸ້ນເກົ່າ - ໃໝ່ (ເງິນປີ 2020 ສຳລັບກີບ) ທັງເງິນກີບ ແລະ ເງິນຕາຕ່າງປະເທດ, ອາໄຫຼ່ສາມາດສະໜອງໃຫ້ໄດ້ໄລຍະ 5-10 ປີຕໍ່ໜ້າ, ມີຈໍນອກເສີມ.

2.3 **ຄວາມສາມາດຂອງຈັກ 5 ຊ່ອງ + 8 ຊ່ອງ** ຢ່າງໜ້ອຍ: ນັບເງິນ ກວດເງິນປອມ ລຽງໜ້າເງິນ ແລະ ຄັດແຍກເງິນເກົ່າ-ໃໝ່ ໄດ້; ສາມາດຄັດແຍກຕ່າງສະກຸນເງິນພ້ອມກັນໄດ້; ກວດເງິນປອມໄດ້ຢ່າງໜ້ອຍ 7 ສະກຸນເງິນ: (LAK, USD, CNY, THB, EUR, GBP,AUD); ສາມາດຄັດນັບ ແລະ ຄັດແຍກເງິນສະກຸນເງິນກີບ ແລະ ເງິນຕາຕ່າງປະເທດໄດ້ທຸກປະເພດໃບເງິນ ທີ່ນຳໃຊ້ໃນປະຈຸບັນ, ຄວາມໄວໃນການນັບຢ່າງໜ້ອຍ 700 ໃບ/ນາທີ; ຊ່ອງຮັບເງິນທີ່ນັບແລ້ວ 2,000 ໃບ, ຊ່ອງຮອງຮັບເງິນທີ່ນັບ-ຄັດແລ້ວ ສາມາດຮອງຮັບເງິນໄດ້ເຖິງ 500ໃບ, ສາມາດຄັດແຍກເງິນໄດ້ຕາມສະພາບທີ່ທະນາຄານຕ້ອງການ ເກົ່າ, ກາງ, ໃໝ່, ສາມາດໄຈ້ປີ ປະເພດໃບເງິນ ສາມາດລຽງໜ້າໄດ້, ສາມາດກວດຈັບເງິນປອມໄດ້, ສາມາດອັບເດດຊອບແວເຄື່ອງ ເພື່ອຮອງຮັບເງິນລຸ້ນໃໝ່, ມີຈໍຄວບຄຸມລະບົບສຳພັດ (ນິ້ວ), ສາມາດຮັບເງິນລຸ້ນເກົ່າ - ໃໝ່ (ເງິນປີ 2020 ສຳລັບກີບ) ທັງເງິນກີບ ແລະ ເງິນຕາຕ່າງປະເທດ ອາໄຫຼ່ສາມາດສະໜອງໃຫ້ໄດ້ໄລຍະ 5-10 ປີຕໍ່ໜ້າ.

3. **ບໍລິສັດໃດທີ່ມີເງື່ອນໄຂໃຫ້ຈ່າຍຜ່ອນ ຫຼື ເຊົ່າ ແມ່ນໃຫ້ລະບຸມາພ້ອມ.**
4. ເອກະສານຂ້າງເທິງແມ່ນໃຫ້ຍື່ນກ່ອນ ວັນພະຫັດ ທີ 13/07/2023 ເວລາ 11:00 ໂມງ ໂດຍການສົ່ງຟາຍເຂົ້າ E-mail: procurement@bcel.com.la.

➢ **ເອກະສານ ຊອງທີ 2 (ປິດຊອງ):**

1. ໃບສະເໜີລາຄາໃຫ້ລວມອາກອນມູນຄ່າເພີ່ມ ພ້ອມທັງລະບຸເປັນສະກຸນເງິນກີບ.
2. ຜູ້ສະໜອງຕ້ອງວາງເງິນຄ້ຳປະກັນການປະມູນຢ່າງໜ້ອຍ 2% ຂອງມູນຄ່າທັງໝົດ ໂດຍໜັງສືຄ້ຳປະກັນທີ່ອອກໂດຍທະນາຄານພາຍໃນ (ວັນໝົດອາຍຸໜັງສືຄ້ຳປະກັນຕ້ອງເຖິງ ວັນທີ 28/08/2023) ຫຼື ແຊັກທີ່ວິຊ້າແລ້ວ (ທຄຕລ ບໍ່ຮັບເງິນສົດ), ພາຍຫຼັງປະກາດຜົນ ທຄຕລ ຈະສົ່ງໜັງສືຄ້ຳປະກັນດັ່ງ ກ່າວຄືນ.
3. ໃນ **ວັນສຸກ ວັນທີ 28/07/2023 ເວລາ 09:00 ໂມງ** ແມ່ນມື້ເປີດຊອງປະມູນ ສະນັ້ນ ໃຫ້ຜູ້ສະໜອງທີ່ຜ່ານການຄັດເລືອກຈາກເອກະສານຊອງທີ 1 ມາຍື່ນຊອງລາຄາມາດ້ວຍຕົນເອງ ຫຼື ສົ່ງຜູ້ຕາງໜ້າເຂົ້າຮ່ວມທີ່ຫ້ອງປະຊຸມຊັ້ນ 5 ອາຄານ C.

**ໝາຍເຫດ:** ທຄຕລ ຂໍສະຫງວນສິດ ປະຕິເສດຜູ້ສະໜອງທີ່ປະກອບເອກະສານບໍ່ຄົບຖ້ວນ ຫຼື ບໍ່ຖືກຕ້ອງຕາມການກຳນົດຂ້າງເທິງ. ການຄັດເລືອກຜູ້ສະໜອງ ແມ່ນຈະໄດ້ຄັດເລືອກຈາກຫຼາຍເງື່ອນໄຂ (ບໍ່ໄດ້ຄັດເລືອກຈາກລາຄາພຽງຢ່າງດຽວ).

**ເງື່ອນໄຂຂອງສັນຍາລະຫວ່າງ ທຄຕລ ແລະ ຜູ້ສະໜອງທີ່ຊະນະການປະມູນ:**

1. ຜູ້ທີ່ຊະນະການປະມູນຈະໄດ້ເຊັນສັນຍາກັບ ທຄຕລ ແລະ ຮັບຜິດຊອບຄ່າທຳນຽມໃນການຈົດທະບຽນສັນຍາ.
2. ຖ້າຜູ້ຊະນະການປະມູນ ປະຕິເສດການເຊັນສັນຍາ ແມ່ນຕ້ອງໄດ້ຈ່າຍຄ່າເສຍຫາຍໃຫ້ແກ່ ທຄຕລ ໃນອັດຕາ 2% ຂອງມູນຄ່າລວມທີ່ສະເໜີປະມູນ.

3. ການຊຳລະແບ່ງຈ່າຍເປັນ 02 ງວດ ລຸ່ມນີ້:

* ງວດທີ 1: ຊຳລະ 90% ພາຍຫຼັງໄດ້ຮັບສິນຄ້າຖືກຕ້ອງຄົບຖ້ວນ ແລະ ຜ່ານການກວດກາຈາກທັງ 02 ຝ່າຍ ພາຍໃນ 20 ວັນລັດຖະການ.
* ງວດທີ 2: ຊຳລະ 10% ຂອງມູນຄ່າສັນຍາ ພາຍຫຼັງຮັບສິນຄ້າ 06 ເດືອນ.

ດັ່ງນັ້ນ, ຈຶ່ງແຈ້ງເຊີນມາຍັງທ່ານ ທີ່ມີຄວາມສົນໃຈເຂົ້າຮ່ວມຍື່ນຊອງປະມູນລາຄາໃນຄັ້ງນີ້ດ້ວຍ.

**ຜູ້ອຳນວຍການ**

ທະນາຄານ ການຄ້າຕ່າງປະເທດລາວ ມະຫາຊົນ
BANQUE POUR LE COMMERCE EXTERIEUR LAO PUBLIC

ນ. ສາຍສະໜອນ ຈັນທະຈັກ

ຕິດຕໍ່ພົວພັນ:

ຂະແໜງສະໜອງວັດຖຸເຕັກນິກ: 213200 ຕໍ່ 414

## (ຕົວຢ່າງ) **ລາຍລະອຽດເອກະສານການປະມູນ** (ກະລຸນາຕື່ມຂໍ້ມູນ ແລະ ເຊັນຢັ້ງຢືນ)

- ອີງຕາມໃບແຈ້ງປະມູນ ສະບັບເລກທີ ............/ທຄຕລ, ລົງວັນທີ ......................

| ລ/ດ | ຜູ້ສະໜອງ | ເງື່ອນໄຂ | | | | | | | | | | ໝາຍເຫດ |
|---|---|---|---|---|---|---|---|---|---|---|---|---|
| | | ໃບທະບຽນວິສາຫະກິດ | ໃບຢັ້ງຢືນການເສຍອາກອນ 2021 | ໃບອະນຸຍາດດຳເນີນທຸລະກິດ 2021 | ໄລຍະເວລາໃນການດຳເນີນທຸລະກິດ | ຜົນງານຜ່ານມາ (ເຄີຍສະໜອງໃຫ້ພາກສ່ວນໃດແນ່) | ໃບອະນຸຍາດເປັນຕົວແທນ | ປະເພດ / ວັດສະດຸ / ຍີ່ຫໍ້ສິນຄ້າ | ປະເທດຜະລິດ | ການຮັບປະກັນສິນຄ້າ | ກຳນົດສົ່ງ (ວັນ) | |
| 1 | ບ/ສ......... | (ເລກທີ/ 02.xx.20xx) | (ເລກທີ/ 02.xx.20xx) | (ເລກທີ/ 02.xx.20xx) | .... ປີ | (ໃຫ້ລະບຸ) | (ໃຫ້ລະບຸ) | - ສະເປັກ: ..........<br>- ການອັບເດດ Software ..........<br>- ການຝຶກອົບຮົມ ........<br>- ການບຳລຸງຮັກສາ/ບໍລິການຫຼັງການຂາຍ ...<br>- ການຮັບປະກັນການເຄຼມຄືນ ໃນກໍລະນີທີ່ເງິນປອມສາມາດຜ່ານໄດ້ ......<br>- ເງື່ອນໄຂ: ............ | ປະເທດ ....... | .... ປີ | ...... | |

ໝາຍເຫດ: ຂໍ້ມູນທີ່ແຈ້ງຂ້າງເທິງນີ້ ເປັນຄວາມຈິງທຸກປະການ, ຖ້າມີຂໍ້ມູນຜິດພາດ ຂ້າພະເຈົ້າຂໍຮັບຜິດຊອບເອງທຸກປະການ.

ນະຄອນຫຼວງວຽງຈັນ, ວັນທີ .......................

ຜູ້ອຳນວຍການບໍລິສັດ

ຜູ້ປະສານງານບໍລິສັດ:

ຊື່:

ໂທ:

ຈັກດັດເງິນ